**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ຫ້ອງວ່າການລັດຖະບານ** ເລກທີ 1360/ຫລບ.ກສສ

ນະຄອນຫຼວງວຽງຈັນ, ວັນທີ 18-8-2015

# <u>ແຈ້ງການ</u>

**ຮຽນ:** - ທ່ານ ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້.

- ທ່ານ ລັດຖະມົນຕີວ່າການ ກະຊວງການເງິນ.
- ທ່ານ ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ.

**ເລື່ອງ :** ທິດຊີ້ນຳກ່ຽວກັບ ການຈັດຕັ້ງປະຕິບັດລາຄາພັນທະໄມ້ສົ່ງອອກຕ່າງປະເທດ ປະເພດ ໄມ້ທ່ອນ, ໄມ້ຕີຕັບ, ໄມ້ແປຮູບ ແລະ ໄມ້ເຄິ່ງສຳເລັດຮູບ ຕາມແຈ້ງການ ຂອງຫ້ອງວ່າການລັດຖະບານ ສະບັບເລກທີ 700/ຫລບ.ກລຂ, ລົງວັນທີ 30/04/2015 ແລະ ການຜັນຂະຫຍາຍ ແຈ້ງການ ສະບັບເລກທີ 790/ຫລບ.ກລຂ, ລົງວັນທີ 21/05/2015.

- ອີງຕາມ ເອກະສານສະເໜີ ຂອງກົມນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2211/ກຂອ.ບຂອ, ລົງວັນທີ 15 ພຶດສະພາ 2015.

- ອີງຕາມ ເອກະສານລາຍງານຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1153/ ອຄ.ກຂອ, ລົງວັນທີ 11 ມິຖຸນາ 2015.

- ອີງຕາມ ການຕົກລົງຂອງທ່ານ ນາຍົກລັດຖະມົນຕີ ແລະ ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດຂົງເຂດການຜະລິດ ແລະ ຈໍລະຈອນ ຄັ້ງວັນທີ 03 ສິງຫາ 2015.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງການຕົກລົງຂອງ ທ່ານ ນາຍົກລັດຖະມົນຕີ ແລະ ທ່ານ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດຂົງເຂດການຜະລິດ ແລະ ຈໍລະຈອນ ມາຍັງທ່ານຊາບ ດັ່ງນີ້: **" ບໍ່ອະນຸຍາດໃຫ້ສົ່ງອອກໄມ້ທ່ອນ, ໄມ້ຕີຕັບ ອອກໄປຕ່າງປະເທດຢ່າງເດັດຂາດ, ໃຫ້ປຸງແຕ່ງສຳເລັດຮູບແລ້ວຈຶ່ງສົ່ງອອກ ໃຫ້ປະຕິບັດຕາມແຈ້ງການຂອງ ຫ້ອງວ່າການລັດຖະບານ ສະບັບເລກທີ 790/ຫລບ.ກລຂ, ລົງວັນທີ 21 ພຶດສະພາ 2015 ຢ່າງເຂັ້ມງວດ."**

<u>ໝາຍເຫດ</u>: ແຈ້ງການສະບັບນີ້ປ່ຽນແທນແຈ້ງການ ສະບັບເລກທີ 700/ຫລບ.ກລຂ, ລົງວັນທີ 30 ເມສາ 2015.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມຈິດໃຈຊີ້ນຳຂອງຂັ້ນເທິງດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ຫ້ອງວ່າການລັດຖະບານ – ລັດຖະມົນຕີ, ຫົວໜ້າ

**ສອນໄຊ ສີພັນດອນ**

<u>ບ່ອນນຳສົ່ງ:</u>

| | |
|---|---|
| - ທ່ານ ນາຍົກ-ຮອງນາຍົກ | 06 ສະບັບ. |
| - ຫ້ອງວ່າການສູນກາງພັກ | 01 ສະບັບ. |
| - ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ. |
| - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 01 ສະບັບ. |
| - ແຂວງໄຊສົມບູນ | 01 ສະບັບ. |
| - ຄະນະ ຫລບ ທ່ານລະ | 01 ສະບັບ. |
| - ກົມສັງລວມເສດຖະກິດ,ຫລບ | 01 ສະບັບ. |
| - ເກັບມ້ຽນ | 01 ສະບັບ. |